ແຈ້ງການເລື້ອງຂໍ້ມູນຂ່າວສານ ສຳລັບຜູ້ຮັບຜົນປະໂຫຍດ CALFRESH ສຳຄັນ – ກະຣຸນາອ່ານ

ແຈ້ງການສະບັບນີ້ແມ່ນຂໍ້ມູນເທົ່ານັ້ນ. ທ່ານບໍ່ຈຳເປັນຕ້ອງເຮັດຫຍັງ ໃນເວລານີ້.

ການປ່ຽນແປງກົດໝາຍຣັຖສຳລັບ ຜູ້ຮັບຜົນປະໂຫຍດ CalFresh

ທ່ານກຳລັງຮັບເອົາຟອມນີ້ ເນື່ອງຈາກທ່ານເປັນຄົວເຮືອນທີ່ຕ້ອງລາຍງານ ການປ່ຽນແປງໃດໜຶ່ງ.

ໂດຍເລີ້ມແຕ່ _____ (ວັນທີ), ທ່ານຈະບໍ່ແມ່ນຄົວເຮືອນທີ່ຕ້ອງລາຍງານ ການປ່ຽນແປງອີກຕໍ່ໄປ. ຫຼັງຈາກ _____ (ວັນທີ), ທ່ານ ຈະເປັນຄົວເຮືອນທີ່ຕ້ອງລາຍງານທຸກເຄິ່ງປີ. ນີ້ກໍແມ່ນຍ້ອນການປ່ຽນແປງໃນກົດ ໝາຍຂອງຣັຖ.

ສິ່ງນີ້ຈະໝາຍເຖິງຫຍັງ?

ໂດຍເລີ້ມແຕ່ _____ (ວັນທີ), ທ່ານຈະບໍ່ຕ້ອງລາຍງານການປ່ຽນແປງ ທັງໝົດຕໍ່ພະນັກງານກຳກັບການຊ່ວຍເຫຼືອ ຂອງທ່ານພາຍໃນ 10 ວັນອີກຕໍ່ໄປ.

ທ່ານຈຳຕ້ອງລາຍງານສະເພາະເມື່ອລາຍໄດ້ ຂອງທ່ານສູງກາຍຈຳນວນທີ່ກຳນົດໄວ້. ຄາວຕີ້ຈະບອກຈຳນວນທີ່ກຳນົດໄວ້ດັ່ງກ່າວນີ້ແກ່ທ່ານ ເມື່ອມີການປ່ຽນແປງເກີດ ຂຶ້ນ.

ນອກຈາກນີ້, ທ່ານຈະຕ້ອງສົ່ງຟອມໜຶ່ງທີ່ເອີ້ນວ່າ SAR 7 ການລາຍງານສະຖາ ນະການມີສິດ ເໝາະສົມ. ພວກເຮົາຈະສົ່ງຟອມນີ້ໃຫ້ທ່ານ ເມື່ອຮອດເວລາທີ່ຈະ ຕ້ອງສົ່ງຟອມນີ້.

ຂ້າພະເຈົ້າຈຳເປັນຕ້ອງເຮັດຫຍັງບໍ່ໃນເວລານີ້?

ຈົນກວ່າຈະຮອດວັນທີ _____ (ວັນທີ), ທ່ານກໍຈະຍັງຕ້ອງລາ ຍງານ ການປ່ຽນແປງທັງໝົດໃຫ້ແກ່ ພະນັກງານກຳກັບການຊ່ວຍເຫຼືອຂອງທ່ານ ພາຍໃນ 10 ວັນ.

ສິ່ງນີ້ຈະປ່ຽນແປງຜົນປະໂຫຍດຂອງທ່ານແນວໃດ?

ສິ່ງນີ້ຈະບໍ່ປ່ຽນແປງຈຳນວນຜົນປະໂຫຍດຂອງທ່ານ. ຜົນປະໂຫຍດຂອງທ່ານຈະ ຍັງຄົງຖືກຄິດໄລ່ແບບເກົ່າຢູ່.

ຂ້າພະເຈົ້າສາມາດຮັບເອົາຂໍ້ມູນໄດ້ຈາກບ່ອນໃດແດ່?

ຖ້າວ່າ ທ່ານຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບ ການປ່ຽນແປງນີ້ ທ່ານສາມາດໂທຣ ຫຼື ໄປທີ່ຫ້ອງການ ປະຈຳຄາວຕີ້ຂອງທ່ານໄດ້.